## ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 1 ທັນວາ 2024 (12-1-2024)

---

## ເບິ່ງໄປທາງໜ້າດ້ວຍຄວາມຫວັງ

**ຈຸດສຳຄັນໃນບົດຮຽນ:** ພວກເຮົາມີຄວາມຫວັງທີ່ແນ່ນອນເພາະວ່າພຣະເຢຊູໄດ້ມາຫາພວກເຮົາແລ້ວ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ຄວາມຫວັງສາມາດມີຫຼາຍຮູບແບບ. ສຳລັບເດັກນ້ອຍ, ຄວາມຫວັງອາດຈະສຸມໃສ່ສິ່ງທີ່ເຂົາເຈົ້າຈະເປີດໃນວັນຄຣິສມາດ. ເມື່ອເຮົາທີ່ອາຍຸຫຼາຍຂຶ້ນ, ຄວາມຫວັງສາມາດປ່ຽນຈາກຄວາມຕື່ນເຕັ້ນໄປສູ່ຄວາມຄາດຫວັງແລະຈາກຄວາມແປກໃຈໄປສູ່ຄວາມຢູ່ລອດ. ນາຍຈ່າກອງທັບອາກາດຂອງສະຫະລັດ ລອຍ ພານເດີ (Lloyd Ponder) ໄດ້ຮູ້ຈັກຄວາມຫວັງແບບນັ້ນ. ຢູ່ໃນຄ້າຍນັກໂທດທະຫານຂອງສົງຄາມ (Prisoner of war) (POW) ຂອງຍີ່ປຸ່ນໃນລະຫວ່າງສົງຄາມໂລກຄັ້ງທີ 2, ພານເດີ ໄດ້ມີຄວາມຫວັງທີ່ບໍ່ຕາຍສຳລັບອິສຣະພາບ. "ຂ້ອຍຍັງຈື່ຄວາມຄິດທີ່ວ່າ "ຖ້າຜູ້ໃດຈະອອກຈາກນີ້ໂດຍບໍ່ຕາຍ, ມັນຈະຕ້ອງແມ່ນຂ້ອຍ." ພານເດີ ສະທ້ອນໃຫ້ເຫັນ, "ຄວາມຕັ້ງໃຈແມ່ນທັສນະຄະຕິທີ່ເຈົ້າຕ້ອງມີ, ການຮູ້ວ່າເຈົ້າອາດສາມາດຢູ່ລອດສະຖານະການໃດກໍຕາມ!" ສິ່ງທີ່ເຮັດໃຫ້ລາວສຸມໃສ່ການຢູ່ລອດ. "ຄວາມຫວັງເຮັດໃຫ້ແຕກຕ່າງ," ພານເດີສລຸບ "ຖ້າທ່ານບໍ່ມີຄວາມຫວັງ, ທ່ານກໍຈົບໄປ. ການມີຄວາມຫວັງສາມາດເຮັດໃຫ້ທ່ານຜ່ານຜ່າສິ່ງໃດກໍໄດ້." ຄວາມຫວັງເຮັດໃຫ້ພວກເຮົາດຳເນີນຕໍ່ໄປໄດ້, ແລະຄວາມຫວັງແມ່ນການມາເຖິງຂອງທຸກໆຢ່າງທັງປວງ. ມັນບໍ່ແມ່ນຄວາມຫວັງເພື່ອຂອງຂວັນຕ່າງໆແຕ່ແມ່ນຄວາມຫວັງເພື່ອການຍັງເປັນຢູ່. ກ່ອນການສະເດັດມາຂອງພຣະເຢຊູ, ໄພ່ພົນຂອງພຣະເຈົ້າໄດ້ເພິ່ງພາເຫິງຄວາມຫວັງນີ້, ໃນຂນະທີ່ພວກເຂົາລໍຖ້າການສະເດັດມາຂອງພຣະຜູ້ຊ່ອຍໃຫ້ລອດ. ຂນະທີ່ພວກເຮົາເດີນທາງໄປຫາເມືອງເບັດເລເຮັມສັກສິດນີ້, ເຮົາສາມາດສະທ້ອນເຖິງຄວາມຫວັງທີ່ໄດ້ບັນລຸເປັນຈິງແລະໄດ້ສລອງໃນສິ່ງມະຫັສຈັນແຫ່ງຄວາມລອດ.

*ແມ່ນຫຍັງຄືສິ່ງທີ່ທ່ານຫວັງໃນຕອນທີ່ເປັນເດັກນ້ອຍ?*

**ພຣະຄັມພີກ່າວວ່າຢ່າງໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

**ສຶກສາພຣະຄັມພີ**

### 1. ເອຊາຢາ 40:1-2

*1. ພຣະເຈົ້າຂອງພວກເຮົາຊົງກ່າວວ່າ, "ຈົ່ງເລົ້າໂລມ ຈົ່ງເລົ້າໂລມໄພ່ພົນຂອງເຮົາ" 2. ຈົ່ງສນັບສນຸນອູ້ມຊູຊາວເຢຣູຊາເລັມໃຫ້ບອກວ່າຄວາມທຸກຍາກທໍຣະມານຂອງພວກເຂົານັ້ນບໍ່ມີອີກແລ້ວ ແລະທີ່ທຳບາບນັ້ນກໍໄດ້ຮັບອະພັຍໝົດ ການທີ່ເຮົາໄດ້ລົງໂທດຢ່າງໜັກຍ້ອນການກະທຳບາບຂອງພວກເຂົາເອງນັ້ນໄດ້ຄົບຖ້ວນໝົດແລ້ວ.*

ພຣະທັມເອຊາຢາເປີດສູ່ຫຼຸງນສິບເຊັນໃນບົດທີ 40. ບົດກ່ອນໜ້ານີ້ໄດ້ນຳການພິພາກສາຈາກເບື້ອງເທິງຕົກໃສ່ຊາວຢູດາ, ອິສຣາເອນ, ແລະຊົນຊາດອ້ອມຂ້າງ, ແຕ່ທັນທີທັນໃດ, ຫຼັງຈາກມີການປະກາດທີ່ສລາດສ່ອງໃສ, ໃນທີ່ສຸດກໍມີຄວາມຫວັງ. ມັນຍາກທີ່ຈະພາດການປ່ຽນແປງແນວໂນ້ມຈາກການພິພາກສາໄປສູ່ການບັນເທົາທີ່ຫວານຊື່ນ: "ເລົ້າໂລມ, ເລົ້າໂລມ." ມັນເປັນຄັ້ງດຽວເທົ່ານັ້ນທີ່ພວກເຮົາພົບຄຳວ່າ "ເລົ້າໂລມ" (nacham) ໃນພຣະຄັມພີເດີມພາກຄຳທຳນວາຍ. ຂນະເມື່ອເຮົາອ່ານຜ່ານບົດຂຽນຂອງຜູ້ທຳນວາຍ, ເຮົາໄດ້ປະເຊີນໜ້າກັບຄຳຕຳໜິ, ຄຳຕັກເຕືອນ, ການຄ່ຳຄວນ, ແລະຄວາມໂສກເສົ້າອັນເກົ່າ. ແຕ່ວ່າ, ເອຊາຢາໄດ້ກ່າວພຣະຄຳຂອງພຣະເຈົ້າກັບພວກຄົນທີ່ເອົາແຕ່ໃຈຕົນເອງ, ແລະລາວໄດ້ເວົ້າວ່າ, "ເລົ້າໂລມ." ໃນທ່າມກາງຄວາມຂັດແຍ້ງ, ການບູຊາຮູບປັ້ນ, ແລະການປະຖິ້ມຄວາມເຊື່ອ, ເອຊາຢາໄດ້ຮັບຂໍ້ຄວາມນີ້ຈາກພຣະບິດາ: ຈົ່ງເລົ້າໂລມພວກເຂົາດ້ວຍຂ່າວດີວ່າຮອຍເປື້ອນອັນຂີ້ຮ້າຍຂອງບາບຈະໄດ້

ຖືກຍົກອອກໄປເສັງດ້ວຍພຣະສງ່າຣາສີ, ຍຸກແຫ່ງພຣະຄຸນອັນຕລອດໄປເປັນນິດ. ພຽງແຕ່ສຸດຂອບຟ້າຍັງຈະມີພະເອກຜູ້ນຶ່ງຜູ້ທີ່ຈະນໍາຄວາມເລົ້າໂລມມາ. ມັນບໍ່ແມ່ນພຣະຄຸນລາຄາຖືກ. ມັນບໍ່ແມ່ນການຄືບໜ້າຂອງສະຖາບະການ. ມັນອາດຈະບໍ່ປາກົດໃນສາກພາບເພາະຍ້ອນປະເທດນຶ່ງໄດ້ກະທໍາການຮ່ວມກັນ. ໃນທາງກົງກັນຂ້າມຂ່າວດີແຫ່ງການເລົ້າໂລມນີ້ຈະຖືກເລີ້ມຕົ້ນໂດຍພຣະເຈົ້າ. ການເລົ້າໂລມຂອງເບື້ອງເທິງນີ້ປາກົດໃຫ້ເຫັນໃນບາງບ່ອນທີ່ນັ້ນທີ່ນີ້ໃນໂລກຂອງພວກເຮົາ. ຈໍດິນ ຮາວ (Jordyn Howe) ໄດ້ຮັບການສະແດງໃຫ້ເຫັນເຖິງພຣະຄຸນປະເພດນີ້ສັງອນຶ່ງໃນປີ 2012, ເມື່ອຄວາມເສັງໃຈໃຫຍ່ຫຼວງເກີດຂຶ້ນກັບແມ່ຂອງ ຈີນາ ກູດສແມນ-ເດເຮຊູສ (Jina Guzman-DeJesus) ຜູ້ທີ່ໄດ້ຖືກຂ້າຕາຍໂດຍຈໍດິນ, ໄດ້ໂອບກອດລາວໃນລະຫວ່າງຂັ້ນຕອນການຕັດສິນຄະດີຂອງລາວ, ສເນີການໃຫ້ອະພັຍໂທດ. ພວກເຮົາສເນີຄວາມຫວັງແລະໂອກາດທີສອງໃນຊີວິດ. ເຮົາໄດ້ຄົ້ນພົບວ່າຫຼັງຈາກການກັບໃຈ, ຄວາມອ່ອນໂຍນກໍເກີດຂຶ້ນ. ມີຄວາມເມດຕາແລະຄວາມຫວັງທ່າມກາງຄວາມວຸ້ນວາຍທີ່ພວກເຮົາໄດ້ຜລິດແລະສ້າງຂຶ້ນ. ໃນລະຫວ່າງລະດູການມາເຖິງນີ້, ພວກເຮົາຕ້ອງຮັບຮູ້ວ່າໂລກຍັງສັ່ນສະເທືອນພາຍໃຕ້ນໍ້າໜັກຂອງຄວາມບໍ່ຍຸດຕິທັມແລະການກະບົດ. ມັນຢູ່ທົ່ວທຸກແຫ່ງ. ແຕ່ຢູ່ໃນເມືອງເບັດເລເຮັມ, ພຣະເຈົ້າໄດ້ໃຫ້ຄວາມເລົ້າໂລມແລະຄວາມອ່ອນໂຍນ. ຄວາມສໍາເລັດຂອງຄໍາພະຍາກອນນີ້ຖືກຕໍ່ວິທີການຂອງມັນເອງໂດຍຜ່ານເວລາແຫ່ງຄວາມເມດຕາຂອງພຣະຄຣິດຜູ້ທີ່ເຊື້ອເຊີນພວກເຮົາ, "ບັນດາຜູ້ທີ່ເຮັດການໜັກໜ່ວງ ແລະແບກພາຣະໜັກຈົ່ງມາຫາເຮົາແລະເຮົາຈະໃຫ້ພວກທ່ານໄດ້ຮັບຄວາມເຊົາເມື່ອຍ." (ມທ. 11:28). ນັ້ນເປັນຂ່າວດີຢູ່ບ່ອນນັ້ນ. ຄວາມຫວັງຂອງການສະເດັດມາກໍຄືວ່າເມື່ອພຣະເຍຊູໄດ້ສະເດັດມາ, ພຣະອົງໄດ້ສະເດັດມາຢູ່ໃນໂລກທີ່ເຕັມໄປດ້ວຍຄວາມອິດເມື່ອຍ, ຖືກຕັດອອກ, ການພ່າຍແພ້, ສິ້ນສຸດລົງດ້ວຍຄວາມອ່ອນໂຍນແລະຄວາມຫວັງອັນຮຸ່ງໂລດ. ພຣະອົງບໍ່ໄດ້ລັກຈອບມາຂ້າງຫຼັງພວກເຮົາ, ຢ່າງທັນທີທັນໃດແລະຮ້ອງກ່າວວິຈານຢ່າງແຮງ. ພຣະອົງກ່າວຢ່າງອ່ອນໂຍນ. "ກ່າວຢ່າງອ່ອນໂຍນ" ໝາຍຄວາມວ່າ "ການກ່າວຕໍ່ຫົວໃຈ." ຂ່າວດີເອຊາຢາບອກໄວ້ກໍຄືວ່າສົງຄາມນັ້ນສິ້ນສຸດລົງແລ້ວ, ການຮັບໃຊ້ໄດ້ສໍາເລັດ, ແລະທັງໄດ້ຮັບການໃຫ້ອະພັຍ. ມັນເປັນການຍາກສໍາລັບພວກເຮົາທີ່ຈະເຂົ້າໃຈຢ່າງແທ້ຈິງຈົນກ່ວາພວກເຮົາຮັບຮູ້ວ່າໃນບັນດາຊາວຢິວ, ໜີ້ສິນໄດ້ຮັບການໃຫ້ອະພັຍປົກກະຕິແລ້ວແມ່ນຫຼັງຈາກທົກປີຂອງການເປັນຂ້າທາດ. ທົກປີນັ້ນຕ້ອງເບິ່ງຄືວ່າສິ້ນຫວັງ, ແຕ່ເອຊາຢາໄດ້ປະກາດວ່າການຮັບໃຊ້ທີ່ໜັກໜ່ວງໄດ້ສິ້ນສຸດລົງ.

*ສິ່ງໃດນໍາຄວາມສະບາຍໃຈມາໃຫ້ທ່ານເມື່ອທ່ານຜ່ານຜ່າຊ່ວງເວລາທີ່ຫຍຸ້ງຍາກ?*

## 2. ເອຊາຢາ 40:3-5

*3. ສຽງນຶ່ງຮ້ອງຂຶ້ນວ່າ, "ຈົ່ງຈັດຕຽມຫົນທາງໄວ້ໃນຖິ່ນທຸລະກັນດານ ເພື່ອຕ້ອນຮັບພຣະຜູ້ເປັນເຈົ້າ ຈົ່ງປັດກວາດຫົນທາງໃນຖິ່ນກັນດານໃຫ້ສະອາດ ເພື່ອຕ້ອນຮັບພຣະເຈົ້າຂອງພວກເຮົາ 4. ຮ່ອມພູທຸກໆແຫ່ງຈະຕ້ອງຖົມໃຫ້ເຕັມ ພູທຸກໆໜ່ວຍຈະຕ້ອງເປັນດິນພຽງເນີນສູງທັງຫລາຍຈະຮາບພຽງຫມົດ ບ່ອນສູງບ່ອນຕໍ່າຈະພຽງສເມີກັນ 5. ແລ້ວພຣະຣັສມີຄວາມຍິ່ງໃຫຍ່ຂອງພຣະຜູ້ເປັນເຈົ້າຈະມາປາກົດ ມະນຸດໃນໂລກຈະເຫັນກັນທຸກຄົນ ພຣະຜູ້ເປັນເຈົ້າເອງຊົງສັນຍາດັ່ງນີ້"*

ທ່ານອາດຈະຈົດຈໍາປະສົບການໃນຖິ່ນທຸລະກັນດານ. ຂອງຂ້າພະເຈົ້າໄດ້ເກີດຂຶ້ນເມື່ອຂັບລົດໄປຫາບ້ານນ້ອຍແຫ່ງນຶ່ງໃນລັດເຄັນທັກກີ (Kentucky) ໃນການເດີນທາງທຸລະກິດ. ລັດເຄັນທັກກີ ມີປ່າດົງຕຶບສອງສາມບ່ອນ. ຍິ່ງໄປໃກ້ຈະຮອດຈຸດໝາຍປາຍທາງຫຼາຍເທົ່າໃດ, ແອັບຕ່າງໆໃນໂທລະສັບຂອງຂ້າພະເຈົ້າກໍບໍ່ເຮັດວຽກ, ແຕ່ແອັບແຜນທີ່ຍັງເຮັດວຽກໄດ້ດີ ແລະນໍາໄປຫາປາຍທາງຂອງຂ້າພະເຈົ້າໂດຍກົງ. ຫຼັງຈາກກອງປະຊຸມທີ່ຈັດຢູ່ພື້ນທີ່ນອກເມືອງ, ຂ້າພະເຈົ້າໄດ້ຂຶ້ນລົດເພື່ອມຸ່ງໜ້າກັບຄືນບ້ານ. ຂ້າພະເຈົ້າໄດ້ກົດໃສ່ປຸ່ມ "ເຮືອນ" ໃນແອັບແຜນທີ່, ແລະມັນບໍ່ມີການເຄື່ອນໄຫວເລີຍ. ໂທລະສັບຂອງຂ້າພະເຈົ້າຢູ່ໃນພາວະການສູນເສັງຄວາມຊົງຈໍາບ່ອນຢູ່ຂອງຂ້າພະເຈົ້າ, ຂ້າພະເຈົ້າບໍ່ຄິດວ່າ ສີຣີ ຮູ້ວ່າຂ້າພະເຈົ້າແມ່ນໃຜ! ຂ້າພະເຈົ້າບໍ່ໄດ້ໃຫ້ຄວາມສົນໃຈຫຼາຍກັບບ່ອນທີ່ຂ້າພະເຈົ້າຂັບຣົດຢູ່ນັ້ນ, ແລະເມື່ອຂ້າພະເຈົ້າໄດ້ກັບຄືນສອງເທົ່າເພື່ອຂໍເສັ້ນທາງ, ທຸກໆຄົນຈາກກອງປະຊຸມໄດ້ກັບໄປໝົດແລ້ວ. ຂ້າພະເຈົ້າສົງສັຍວ່າຈະບໍ່ໄດ້ເຫັນພັນລະຍາແລະລູກອີກເລີຍ. ຢ່າງແທ້ຈິງ! ຂ້າພະເຈົ້າພົບວ່າຕົວເອງຢູ່ຖນົນຊົນນະບົດແຫ່ງນຶ່ງໃນລັດເຄັນທັກກີ, ບ່ອນທີ່ມີງົວແລະກວາງຈໍານວນຫຼວງຫຼາຍກວ່າມະນຸດ. ແລະເໜືອສິ່ງທັງໝົດນີ້, ນໍ້າມັນຣົດກໍເກືອບຈະໝົດ. ໃນທີ່ສຸດ, ກໍໄດ້ເຖິງທາງແຍກ.

ເປັນສີ່ແຍກທີ່ແທ້ຈິງ! ຂ້າພະເຈົ້າເຫັນປ້າຍຢຸດ! ແລະຫຼັງຈາກນັ້ນ, ໂທລະສັບຂອງຂ້າພະເຈົ້າໄດ້ຮັບລູກກະສຸນກັບຄືນມາ. ຮາເລລູຢາ! ຂ້າພະເຈົ້າໄດ້ລອດຊີວິດຈາກຖິ່ນທຸລະກັນດານ. ພວກເຮົາທຸກຄົນມີເວລາຂອງການຖືກຕັດຂາດຈາກການຕິດຕໍ່. ຖິ່ນທຸລະກັນດານໃນພຣະຄັມພີເປັນຕົວແທນໃຫ້ແກ່ຄວາມອ້າງວ້າງ, ຄວາມວຸ້ນວາຍ, ຄວາມແຫ້ງແລ້ງ, ແລະການແຍກຕົວອອກຫຼາຍກວ່າການຂາດບໍລິການມືຖື. ເຮົາສາມາດຮູ້ສຶກວ່າຂາດການເຊື່ອມຕໍ່ກັບພຣະເຈົ້າ. ການຢູ່ໃນຖິ່ນແຫ້ງແລ້ງກັນດານແມ່ນຄວາມໂດດດ່ຽວແລະຄວາມຂາດແຄນ. ມັນເປັນເວລາທີ່ພວກເຮົາຮູ້ສຶກວ່າພວກເຮົາເບິ່ງພາຍນອກ, ພວກເຮົາເວົ້າກັບຕົວເຮົາເອງ, "ປາກົດວ່າ, ພຣະເຈົ້າກຳລັງເຮັດວຽກຢູ່ໃນຊີວິດຂອງຄົນອື່ນ, ແຕ່ບໍ່ແມ່ນໃນຂອງເຮົາ." ມັນເປັນສະຖານທີ່ຂອງຄວາມລຳບາກແລະຄວາມຫວ່າງເປົ່າ, ບ່ອນທີ່ປະຊາຊົນອາດຈະປະສົບກັບຄວາມຮູ້ສຶກຂອງການປະຖິ້ມຫຼືຄວາມແຫ້ງແລ້ງທາງວິນຍານ. ຢ່າງໃດກໍຕາມ, ນີ້ແມ່ນສິ່ງທີ່ຫຼາຍຄົນເຄີຍມີປະສົບການ. ແຕ່ສິ່ງທີ່ໜ້າອັສຈັນໃຈກ່ຽວກັບຖິ່ນທຸລະກັນດານ ແມ່ນບ່ອນທີ່ພຣະເຈົ້າກະທຳການດີທີ່ສຸດຂອງພຣະອົງ. ຖິ່ນແຫ້ງແລ້ງກັນດານເປັນບ່ອນທີ່ເຮົາສາມາດໄດ້ຍິນພຣະສຸລະສຽງຂອງພຣະເຈົ້າໄດ້ດີທີ່ສຸດ. ພວກເຮົາມັກຈະພົບຄວາມຫວັງໃນຖິ່ນທຸລະກັນດານຂອງພວກເຮົາ. ໂມເຊໄດ້ຄົ້ນພົບພຸ່ມໄມ້ທີ່ລຸກໄໝ້, ນ້ຳຈືດ, ແລະແມ່ນແຕ່ເຈົ້າສາວຢູ່ໃນຖິ່ນແຫ້ງແລ້ງກັນດານ. ເອລີຢາໄດ້ຍິນສຽງອັນງຽບສງົບຂອງພຣະເຈົ້າໃນຖິ່ນທຸລະກັນດານ. ທູດສວັນໄດ້ປະຕິບັດຕໍ່ພຣະເຢຊູໃນຖິ່ນທຸລະກັນດານ. ແລະເຣື່ອງສຸດທ້າຍຂອງຄວາມຫວັງໄດ້ເລີ້ມຕົ້ນດ້ວຍສຽງຮ້ອງອອກມາໃນຖິ່ນທຸລະກັນດານ. ສຽງຮ້ອງນັ້ນເວົ້າຫຍັງ? "ຈົ່ງຈັດຕຽມທາງຂອງອົງພຣະຜູ້ເປັນເຈົ້າ" (ຂໍ້ 3). ສຽງຮຽກຮ້ອງໃຫ້ພວກເຮົາປະຕິບັດ. ອັນນີ້ເຈາະໄປເຖິງຫົວໃຈຂອງການສະເດັດມາ, ໃນຂນະທີ່ພວກເຮົາສເລີມສລອງການສະເດັດມາທີ່ເມືອງເບັດເລເຮັມຂອງພຣະເຢຊູ. ຖນົນຫົນທາງໃນຖິ່ນແຫ້ງແລ້ງກັນດານບໍ່ແມ່ນທາງຫຼວງປະຈຳລັດຫຼືແມ່ນແຕ່ທາງນ້ອຍໄປຕາມສວນ. ໃນສມັຍນັ້ນ, ທາງຂຶ້ນໄປເຢຣູຊາເລັມເປັນທາງທີ່ຄົດລ້ຽວມັກຈະມີເສດຂີ້ເຫຍື້ອທີ່ຈະກີດຂວາງການເດີນທາງແລະນັກທ່ອງທ່ຽວ. ຊື່ຂອງສຽງທີ່ຮ້ອງໄຫ້ຢູ່ໃນຖິ່ນແຫ້ງແລ້ງກັນດານແມ່ນໂຢຮັນບັບຕິສະໂຕ. <u>ເມື່ອເຮົາຄຶດຕຶກຕອງເຖິງການສະເດັດມາຂອງພຣະຄຣິດຕລອດວັນຄຣິສມາດ, ການເອີ້ນຂອງພຣະອົງຍັງຄົງຢູ່. ພວກເຮົາມີຄວາມຮັບຜິດຊອບໃນການກະກຽມທາງສຳລັບພຣະຄຣິດຢູ່ໃນໃຈຂອງພວກເຮົາ, ເພື່ອກຳຈັດອຸປະສັກທີ່ຈະເຮັດໃຫ້ພວກເຮົາບໍ່ປະສົບກັບຄວາມສົມບູນຂອງພຣະເຢຊູ</u>. <u>ພວກເຮົາຍັງມີຄຳສັນຍາແລະຄວາມຫວັງ</u>. ໂລກທີ່ແຕກຫັກນີ້ທີ່ມີເສັ້ນທາງທີ່ບໍ່ສົມບູນແບບແລະການຫັນປ່ຽນທີ່ໜ້າປລາດໃຈໃນທີ່ສຸດຈະກາຍເປັນກ້ຽງແລະຊື່ໄປ. ຍິ່ງໄປກວ່ານັ້ນ, ເຊັ່ນດຽວກັບຄົນລ້ຽງແກະຢູ່ນອກເມືອງເບັດເລເຮັມ, ເຮົາຈະໄດ້ປະສົບກັບສງ່າຣາສີຂອງພຣະຜູ້ເປັນເຈົ້າ. ແລະເອຊາຢາແມ່ນຈະແຈ້ງກ່ຽວກັບມັນ. ເນື້ອໜັງທັງໝົດຈະເຫັນນຳກັນ. ດ້ວຍການປາກົດຕົວຂອງພຣະເຢຊູ, ພວກເຮົາທຸກຄົນຈະເຫັນສງ່າຣາສີ.

*ທ່ານເຫັນສງ່າຣາສີຂອງພຣະເຈົ້າຢູ່ໃສໃນໂລກຂອງເຮົາທຸກມື້ນີ້?*

### 3. ເອຊາຢາ 40:9-11

*9. ຊາວເຢຣູຊາເລັມເອີຍ, ຈົ່ງຂຶ້ນໄປເທິງພູສູງ ປ່າວປະກາດຂ່າວດີນັ້ນ ຊາວຊີໂອນເອີຍ ຈົ່ງຮ້ອງສຽງດັງໆ ຈົ່ງປ່າວປະກາດຂ່າວດີນັ້ນ ແລະເວົ້າເຖີດວ່າ ຢ່າຢ້ານເລີຍ ຈົ່ງບອກຫົວເມືອງຂອງຢູດາວ່າ ພຣະເຈົ້າຂອງເຂົາຈະສະເດັດມາ 10. ພຣະຜູ້ເປັນເຈົ້າຈະສະເດັດມາປົກຄອງໄພ່ພົນດ້ວຍຣິດທານຸພາບ ພ້ອມທັງນຳປະຊາຊົນທີ່ພຣະອົງຊົງຊ່ອຍຊີວິດໃຫ້ລອດພົ້ນນັ້ນມາພ້ອມ 11. ພຣະອົງຈະຊົງລ້ຽງຝູງສັດຂອງພຣະອົງເຫມືອນຄົນລ້ຽງແກະ ຈະຊົງຮວບຮວມເອົາລູກແກະແລະອຸ້ມມັນໄວ້ ຈະຊົງນຳແມ່ມັນໄປຄ່ອຍໆຢ່າງທະນຸຖະນອມ*

ກາບກອນຄຳທຳນວາຍນີ້ໄດ້ຖືກຍົກຂຶ້ນໃນຄວາມຍິນດີ, ເລີ້ມຕົ້ນໃນຂໍ້ 9. ຈາກ "ຈົ່ງຂຶ້ນໄປເທິງພູສູງ ປ່າວປະກາດຂ່າວດີນັ້ນ" ການນະມັສການໄດ້ສເລີມສລອງຄຳທຳນວາຍທີ່ດົນນານຂອງເອຊາຢາ. ມັນຢູ່ໃນກະດູກຂອງພວກເຮົາ. ມັນເປັນການປະກາດອັນຍິ່ງໃຫຍ່ຂອງການລິເລີ້ມການມາປາກົດຂອງພຣະເມຊີອາ. ຄວາມເຂັ້ມແຂງຂອງພຣະອົງແມ່ນມີຣິດອຳນາດສູງສຸດ. ການມາຂອງພຣະອົງເຮັດໃຫ້ສະຖານະການທີ່ເປັນຢູ່ແຕກຫັກ. ຂໍ້ຄວາມທັງໝົດນີ້ຮ້ອງເຖິງຄວາມໃໝ່ອຸ່ນ, ການປ່ຽນແປງ, ການເປີດເຜີຍ, ແລະລາງວັນ. ແມ່ນແລ້ວ, ລາງວັນ. ພຣະອົງໄດ້ມີສິ່ງນັ້ນຄືກັນ. ແຕ່ໃນຂໍ້ທີ 11, ພວກເຮົາໄດ້ເຫຼືອບເຫັນລັກສນະຂອງພຣະເຢຊູ. ທັງໝົດຢູ່ໃນຄຳກິລິຍາ:

**1. ພຣະອົງປົກປ້ອງ**. ເຮົາເຫັນພຣະເມຊີອາບໍ່ໄດ້ເປັນຜູ້ທີ່ນໍາມາແຫ່ງອັນຕລາຍ. ພຣະອົງເປັນຜູ້ທີ່ກໍາຈັດອັນຕລາຍ. ພຣະອົງເປັນຜູ້ລ້ຽງທີ່ດີ. **2. ພຣະອົງຮວບຮວມ**. ຜູ້ລ້ຽງທີ່ດີແມ່ນຜູ້ທີ່ນໍາພວກເຮົາທັງໝົດມາຮ່ວມກັນ ມັນເປັນທັມມະຊາດຂອງພຣະອົງ ທີ່ຈະເຮັດໃຫ້ເຮົາເປັນເອກະພາບກັນ ໂດຍຜ່ານຄວາມເຂັ້ມແຂງແຫ່ງແຂນຂອງພຣະອົງ. **3. ພຣະອົງແບກ**. ມັນຈະມີເວລາເຫຼົ່ານັ້ນທີ່ພວກເຮົາບໍ່ສາມາດກ້າວໄປອີກກ້າວນຶ່ງ. ກະແສນໍ້າຊັດແຮງແລະພູມີປະເທດທີ່ໜ້າຢ້ານກົວ. ໃນຊ່ວງເວລານັ້ນ, ພຣະອົງຈະແບກພວກເຮົາຜ່ານໄປ. ສິ່ງທີ່ດີກ່ຽວກັບການຖືກແບກແມ່ນວ່າທ່ານບໍ່ຈໍາເປັນຕ້ອງມີທັກສະທີ່ຈະຖືກແບກ. ມັນທັງໝົດຂຶ້ນກັບພຣະອົງ. **4. ພຣະອົງນໍາພາ.** ຜູ້ລ້ຽງແກະທີ່ດີບໍ່ໄດ້ຂັບໄລ່ພວກເຮົາດ້ວຍໄມ້ແສ້, ການຫຼີ້ນຢູ່ໃນຄວາມຢ້ານກົວຂອງຄວາມທຸກທໍຣະມານຂອງພວກເຮົາ. ຂ່າວປະເສີດແມ່ນດີຫຼາຍກວ່ານັ້ນ. ເຮົາຈະຮູ້ຈັກພຣະສຸລະສຽງຂອງພຣະອົງ ແລະເຮົາຈະເຮັດຕາມ.

*ທ່ານໄດ້ພົບລາງວັນອັນໃດໃນການຕິດຕາມພຣະຄຣິດ?*

ເຮົາຈື່ຈໍາຄວາມແປກໃຈຂອງນາງມາຣີອາ, ຜູ້ທີ່ຮູ້ວ່ານາງຈະເປັນແມ່ຂອງກະສັດ, ຄວາມແປກໃຈຂອງໂຢເຊັບ ເມື່ອລາວໄດ້ພົບເຫັນວ່າລາວຈະລ້ຽງດູພຣະຜູ້ຊ່ອຍໃຫ້ລອດ, ແລະຄວາມແປກໃຈຂອງຜູ້ລ້ຽງແກະແລະກະສັດ. ພວກເຮົາຈື່ຈໍາຈຸດເຫຼົ່ານີ້ຢູ່ໃນເຣື່ອງເພາະວ່າພວກເຂົາກາຍເປັນສ່ວນບຸກຄົນສໍາລັບພວກເຮົາ. ໃນບົດທີສາມຂອງໂຢຮັນ, ເມື່ອພວກເຮົາອ່ານວ່າພຣະເຈົ້າຮັກທຸກຄົນຫຼາຍທີ່ພຣະອົງໄດ້ສົ່ງພຣະບຸດຂອງພຣະອົງ, ພວກເຮົາປລາດໃຈວ່າພຣະອົງຈະຮັກພວກເຮົາຫຼາຍ, ແລະຍິ່ງໄປກວ່ານັ້ນພຣະອົງຈະຫຼັ່ງເລືອດຂອງພຣະອົງເພື່ອບາບຂອງພວກເຮົາ, ເອົາຊະນະຄວາມຕາຍ. ແລະຈະກັບຄືນມາໃນມື້ນຶ່ງ. ຈຸດທັງໝົດຂອງຂ່າວປະເສີດແມ່ນວ່າພວກເຮົາເປັນຜູ້ຫຼິ້ນໃນເຣື່ອງ. ພຣະອົງຊົງພຣະຊົນຢູ່ໃນພວກເຮົາແລະມື້ນຶ່ງເຮົາທຸກຄົນຈະຢູ່ນໍາກັນ-ພວກທີ່ໄດ້ຮ່ວມເຮົາໂສກເສົ້າ, ພວກທີ່ເຮົາຮັກ, ແລະພວກທີ່ເຮົາຄິດຫາ. ພຣະອົງເປັນກະສັດທີ່ສົມຄວນໄດ້ຮັບການນະມັສການຂອງພວກເຮົາ. ພຣະອົງເປັນຜູ້ລ້ຽງແກະທີ່ສົມຄວນກັບຄວາມສັດຊື່ຂອງພວກເຮົາ. ພຣະອົງເປັນພຣະຜູ້ເປັນເຈົ້າທີ່ມີຄ່າຄວນຂອງການຮັບໃຊ້ຂອງພວກເຮົາ. ແລະ, ແມ່ນແລ້ວ, ພຣະອົງເປັນພຣະສັນຍາທີ່ສົມຄວນກັບຄວາມຫວັງຂອງພວກເຮົາ.

## ນໍາໃຊ້ໃນຊີວິດ

ພວກເຮົາມີຄວາມຫວັງທີ່ແນ່ນອນເພາະວ່າພຣະເຢຊູໄດ້ມາຫາພວກເຮົາແລ້ວ. ເລືອກນຶ່ງໃນການນໍາໃຊ້ໃນຊີວິດຕໍ່ໄປນີ້:

- **ອະທິຖານ**. ຄວາມຫວັງຂອງພວກເຮົາໃນພຣະຄຣິດຕ້ອງໄດ້ຖືກປູກຝັງ. ທວງຖາມພຣະເຈົ້າໃຫ້ປຸກຄວາມຫວັງທີ່ຢູ່ໃນຕົວທ່ານເມື່ອບໍ່ດົນມານີ້. ກ້າວເຂົ້າສູ່ຊີວິດແຫ່ງຄວາມຄາດຫວັງອັນບໍຣິສຸດໃນຂນະທີ່ທ່ານເດີນທາງຜ່ານລະດູການອັນສັກສິດນີ້.
- **ຂຽນ**. ມີໃຜບາງຄົນໃນຊີວິດຂອງທ່ານທີ່ລົ້ມລຸກຄຸກຄານຍັງຄົງມີຄວາມຫວັງຍ້ອນສະຖານະການ, ຄວາມຜິດຫວັງ, ຫຼືຄວາມຢ້ານກົວບໍ? ຂຽນຂໍ້ຄວາມໃຫ້ກໍາລັງໃຈແລະສົ່ງໃຫ້ຜູ້ນັ້ນແລະບອກວ່າທ່ານກໍາລັງອະທິຖານເພື່ອເຂົາແລະເນັ້ນວ່າຄວາມຫວັງແມ່ນບໍ່ເຄີຍສູນເສັຽໃນພຣະຄຣິດ.
- **ຮັບໃຊ້**. ຄວາມຫວັງຂອງພວກເຮົາຖືກເປີດຜ່ານການຮັບໃຊ້. ໃນອາທິດນີ້, ສະແດງຄວາມຫວັງຂອງທ່ານໂດຍການຮັບໃຊ້ຄົນທີ່ຕ້ອງການ. ມັນອາດຈະເປັນແບບງ່າຍໆເຊັ່ນການຊ່ວຍເຫຼືອບາງຄົນເອ້ຕົບແຕ່ງສໍາລັບເທສການຄຣິສມາດຫຼືເອື້ອມມືອອກໄປຊ່ວຍຄົນແປກໜ້າແລະສເນີຄວາມເອື້ອອໍານວຍແລະຊ່ວຍເຫຼືອ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ PA**